# ກົມໃຫ້ບໍລິການ ເພື່ອການພັດທະນາ

1215 O Street, MS 7-40
Sacramento, CA 95814
TTY: 711
(916) 654-1954

ວັນທີ 15 ກໍລະກົດ 2021

ເຖິງ: ຜູ້ອໍານວຍການບໍລິຫານໃຫຍ່ສູນປະຈໍາພາກພື້ນ

ເລື່ອງ: ໂຄງການໃຫ້ການຊ່ວຍເຫຼືອກໍານົດດ້ວຍຕົວເອງ: ສະໜັບສະໜູນຜູ້ນໍາໃຊ້ເພື່ອການໂອນຍ້າຍເຂົ້າໃນໂຄງການ

ດ້ວຍການເປີດຕົວໂຄງການໃຫ້ການຊ່ວຍເຫຼືອກໍານົດດ້ວຍຕົວເອງ (SDP) ທົ່ວລັດ, ກົມໃຫ້ບໍລິການ ເພື່ອການພັດທະນາ (DDS) ໄດ້ໃຫ້ແນວທາງນີ້ແກ່ບັນດາສູນປະຈໍາພາກພື້ນກ່ຽວກັບການວາງແຜນ ແລະ ການສະໜັບສະໜູນໂດຍເລັ່ງໃສ່ຕົວບຸກຄົນເປັນສູນກາງຫຼັກ ໃຫ້ແກ່ບັນດາບຸກຄົນທີ່ມີຄວາມສົນໃຈໃນການລົງທະບຽນ ຫຼື ໂຍກຍ້າຍເຂົ້າໂຄງການ SDP.

ຈົນກ່ວາຈະມີແຈ້ງການເພີ່ມເຕີມ, ທິດຊີ້ນໍາຂອງ DDS ກ່ຽວກັບການສະໜັບສະໜູນແກ່ການລົງທະບຽນເຂົ້າໂຄງການ SDP ທີ່ອອກໃນຄັ້ງວັນທີ 13 ກຸມພາ 2019, ວັນທີ 3 ກັນຍາ 2019 ແລະ ວັນທີ 30 ຕຸລາ 2020 ແມ່ນຍັງມີຜົນນໍາໃຊ້ໄດ້. ນອກຈາກການສະໜັບສະໜູນທີ່ໄດ້ກໍານົດໄວ້ໃນທິດທາງເຫຼົ່ານີ້, ການສະໜັບສະໜູນການປ່ຽນແປງແມ່ນຍັງມີຢູ່ໃນວິທີດັ່ງຕໍ່ໄປນີ້:

- ຜູ້ປະສານງານບໍລິການຂອງສູນປະຈໍາພາກພື້ນທີ່ຊ່ວຍເຫຼືອບຸກຄົນ ແລະ ຄອບຄົວໃນການຫັນປ່ຽນ.
- ສູນປະຈໍາພາກພື້ນກໍາລັງເຮັດວຽກຮ່ວມກັບຄະນະກໍາມະການທີ່ປຶກສາອາສາສະໝັກທ້ອງຖິ່ນຂອງພວກເຂົາ ເພື່ອຈັດແຈງໜ່ວຍງານຕ່າງໆ ເພື່ອຊ່ວຍໃນການວາງແຜນ ຫຼື ການປ່ຽນແປງໂດຍເລັ່ງໃສ່ຕົວບຸກຄົນເປັນສູນກາງຫຼັກ.
- ເລີ່ມຕົ້ນປີໃຫ້ງົບປະມານປີ 2021-22, ເພື່ອການສະໜອງທຶນໃຫ້ແກ່ບັນດາສູນໃນພາກພື້ນ ເພື່ອຈ້າງຜູ້ຊ່ຽວຊານໃຫ້ທາງເລືອກຜູ້ເຂົ້າຮ່ວມເພື່ອຊ່ວຍເຫຼືອບຸກຄົນໃນການຊອກຫາທິດທາງດ້ວຍຕົນເອງຜ່ານໂຄງໃຫ້ການຊ່ວຍເຫຼືອທີ່ກໍານົດດ້ວຍຕົນເອງ ຫຼື ຜ່ານການນໍາໃຊ້ການບໍລິການທີ່ມີສ່ວນຮ່ວມ. ລາຍລະອຽດເພີ່ມເຕີມກ່ຽວກັບຊັບພະຍາກອນເຫຼົ່ານີ້ທີ່ກໍາລັງຈະມາເຖິງ.

ຂໍ້ມູນເພີ່ມເຕີມກ່ຽວກັບການລົງທະບຽນເຂົ້າໃນໂຄງການ SDP ແລະ ການວາງແຜນໂດຍເລັ່ງໃສ່ຕົວບຸກຄົນເປັນສູນກາງຫຼັກແມ່ນໄດ້ເຜີຍແຜ່ລົງໃນໜ້າເວັບໄຊທ໌ ຂອງ DDShttps://www.dds.ca.gov/initiatives/sdp/frequently-asked-questions/

ຜູ້ບໍລິໂພກ, ສະມາຊິກໃນຄອບຄົວ ຫຼື ຜູ້ໃຫ້ບໍລິການຄວນຕິດຕໍ່ຫາສູນປະຈໍາເຂດຂອງເຂົາເຈົ້າພ້ອມຄໍາຖາມກ່ຽວກັບຄໍາແນະນໍາຂອງແຜນງານນີ້. ຖ້າທ່ານມີຄໍາຖາມໃດໆກ່ຽວກັບຈົດໝາຍຕອບສະບັບນີ້, ກະລຸນາຕິດຕໍ່ໄປທີ່ sdp@dds.ca.gov.

ດ້ວຍຄວາມເຄົາລົບນັບຖື,

*ຕົ້ນສະບັບເຊັນໂດຍ:*

MARICRIS ACON
ຮອງຜູ່ອໍານວຍການ

ສໍາເນົາເຖິງ: Nancy Bargmann, DDS
Brian Winfield, DDS
Erica Reimer Snell, DDS
Tim Travis, DDS
ປະທານຄະນະກໍາມະການສູນກາງປະຈໍາພາກພື້ນ
ຜູ້ບໍລິຫານສູນປະຈໍາເຂດ
ຜູ້ອໍານວຍການສູນປະຈໍາເຂດພາກພື້ນແກ່ການໃຫ້ບໍລິການຜູ້ບໍລິໂພກ
ຜູ້ອໍານວຍການສູນບໍລິການຊຸມຊົນໃນພາກພື້ນ
ສະມາຄົມຂອງອົງການສູນປະຈໍາພາກພື້ນ